## CHDP ໃຫ້ການບໍລິການຫຍັງແດ່?

### ການກວດສຸຂະພາບທົ່ວໄປ:

- ການກວດເບິ່ງການເຕີບໃຫຍ່ແລະການພັດທະນາ
- ການສັກຢາປ້ອງກັນພະຍາດທີ່ຈຳເປັນທຸກຢ່າງ
- ການກວດແຂ້ວ
- ການກວດສາຍຕາ
- ການກວດຫູ
- ການກວດເບິ່ງດ້ານອາຫານບຳລຸງ
- ການໃຫ້ຄວາມຮູ້ດ້ານສຸຂະພາບ
- ການໃຫ້ຄວາມຮູ້ເລື້ອງຢາສູບ
- ການກວດເບິ່ງພະຍາດເລືອດຈາງ, ສານຂີ້ກົ່ວໃນເລືອດ, ຍ່ຽວ, ພະຍາດປອດແຫ້ງ, ແລະອື່ນໆທີ່ຈຳເປັນ
- ການສົ່ງຕໍ່ຈາກໂຄງການ WIC ສຳລັບເດັກນ້ອຍອາຍຸຫາ 5 ປີ

### ການກວດແຂ້ວເປັນປະຈຳແລະການຕິດຕາມກວດເບິ່ງສຸຂະພາບ ຖ້າວ່າຈຳເປັນ.

ຖ້າວ່າ ທ່ານຕ້ອງການການກວດສຸຂະພາບທົ່ວໄປ, ກວດແຂ້ວ, ຫລືກວດສຸຂະພາບຈິດເພີ້ມເຕີມອີກ, ພວກເຮົາຈະຊ່ວຍເຫລືອໃຫ້ທ່ານໄດ້ຮັບການກວດເຫລົ່ານັ້ນ. ພວກເຮົາຈະຈ່າຍຄ່າກວດເບິ່ງມະຕິພະຍາດແລະການປິ່ນປົວຕາບໃດທີ່ລູກຂອງທ່ານຍັງຢູ່ໃນໂຄງການຂອງ Medi-Cal.

ສຳລັບບຸກຄົນທີ່ມີ Medi-Cal ແບບມີຄ່າໃຊ້ຈ່າຍຮ່ວມ, ທ່ານອາດຂໍໃຫ້ໂຄງການ CHDP ເປັນຜູ້ຈ່າຍຄ່າກວດ ຫລືທ່ານອາດເປັນຜູ້ຈ່າຍຄ່າກວດ ແລະນັບເອົາຍອດຄ່າຈ່າຍເຂົ້າໃນລາຍການຈ່າຍທີ່ກຳນົດໄວ້ຂອງທ່ານໄດ້. ບໍ່ຕ້ອງເສັຽຄ່າຈ່າຍຮ່ວມສຳລັບການບໍລິການ CHDP.

ໃຫ້ຖືເອົາບັດປະຈຳຕົວ Medi-Cal ປັດຈຸບັນ ແລະບັນທຶກການສັກຢາປ້ອງກັນພະຍາດມານຳ.

## ຂໍ້ມູນເພີ້ມເຕີມ:

ເພື່ອຂໍເອົາຂໍ້ມູນເພີ້ມເຕີມ, ຫລືຂໍເອົາການຊ່ວຍເຫລືອໃນການເຮັດນັດໝາຍ ແລະພາຫະນະຂົນສົ່ງ, ໃຫ້ຕິດຕໍ່ຫ້ອງການ CHDP ໃນເຂດຂອງທ່ານ. ຈົ່ງຊອກຫານຳ້ເບີໂທຣະສັບຂອງຫ້ອງການຣັຖໃນປື້ມໂທຣະສັບຂອງທ່ານ. ໃຫ້ເບິ່ງຂ້າງລຸ່ມຫົວຂໍ້ *Child Health and Disablility Prevention* ຫລື *Health Department*.

ຫລື, ຊອກຫາຫ້ອງການຂອງ CHDP ໃນເຂດຂອງທ່ານທີ່ **www.dhs.ca.gov/chdp**

**This is an interactive field. This is an interactive field. This is an interactive field. This is an interactive field. This is an interactive field. This is an interactive field. This is an interactive field. This is an interactive field. This is an interactive field. This is an interactive field. This is an interactive field. This is an interactive field.**

ຖ້າວ່າ ທ່ານຕ້ອງການການຊ່ວຍເຫລືອດ້ານສຸຂະພາບຈິດ, ໃຫ້ໂທຣຫາພະແນກສຸຂະພາບຈິດປະຈຳເຄົາຕີ້ຂອງທ່ານ. ເຂົາເຈົ້າສາມາດບອກທ່ານໄດ້ກ່ຽວກັບການບໍລິການອື່ນໆຂອງ Medi-Cal ຢ່າງຄົບຖ້ວນສຳລັບເດັກນ້ອຍແລະເຍົາວະຊົນທີ່ມີບັນຫາຮຸນແຮງດ້ານອາລົມ.

Arnold Schwarzenegger
ຜູ້ວ່າການຣັຖແຄລິຟໍເນັຽ

(Laotian, 1/04)

## Laotian

ໂຄງການປ້ອງກັນສຸຂະພາບແລະການພິການສຳລັບເດັກນ້ອຍ **(CHDP)**

# ການກວດສຸຂະພາບທົ່ວໄປ ແລະການກວດແຂ້ວ



ຟຣີ

ສຳລັບແອນ້ອຍ, ເດັກນ້ອຍ, ແລະ
ເຍົາວະຊົນທີ່ມີອາຍຸເຖິງ **20** ປີ

ໂດຍຮັບການກວດຈາກ **Medi-Cal** ຢ່າງເຕັມສ່ວນ

# ເປັນຫຍັງຈຶ່ງຕ້ອງກວດສຸຂະພາບ?

ການກວດ**ສຸຂະພາບ**ຢ່າງຄົບຖ້ວນສົມບູນອາດຊ່ວຍໃຫ້ຮູ້ບັນຫາສຸຂະພາບທົ່ວໄປ, ບັນຫາດ້ານແຂ້ວ, ແລະ/ຫລືບັນຫາສຸຂະພາບຈິດໄດ້ ກ່ອນທີ່ມັນຈະຮຸນແຮງ. ມີການບໍລິການສັກຢາປ້ອງກັນພະຍາດທີ່ຈຳເປັນ. ຖ້າວ່າທ່ານຕ້ອງການ, ອາດມີການກວດສຸຂະພາບທົ່ວໄປຢູ່ເຮືອນອຸປະຖຳ, ບ່ອນຫລິ້ນກິລາ, ຫລືຢູ່ແຄ້ມປ໌. ໂດຍທົ່ວໄປແລ້ວທ່ານສາມາດຂໍຮັບການກວດ CHDP Check-Ups ໄດ້ໃນບ່ອນທີ່ທ່ານຮັບການບໍລິການດ້ານສຸຂະພາບເປັນປະຈຳ.

## ແອນ້ອຍແລະເດັກນ້ອຍ
***ຕັ້ງແຕ່ເກີດຫາ 3 ປີ***

### ການກວດສຸຂະພາບທົ່ວໄປສຳລັບແອນ້ອຍ ລະການສັກຢາປ້ອງກັນພະຍາດ

ບັນດາແອນ້ອຍແລະເດັກນ້ອຍຈຳເປັນຕ້ອງໄດ້ກວດກາສຸຂະພາບເລື້ອຍໆ. ເຂົາເຈົ້າຈຳເປັນຕ້ອງຮັບການສັກຢາປ້ອງກັນພະຍາດຢ່າງກົງເວລາ.



### ກວດຈັກເທື່ອ?

ຮັບການກວດໜຶ່ງຄັ້ງໃນລະຫວ່າງອາຍຸເຫລົ່ານີ້:

| | |
|---|---|
| ຕ່ຳກວ່າ 1 ເດືອນ | 10-12 ເດືອນ |
| 1-2 ເດືອນ | 13-15 ເດືອນ |
| 3-4 ເດືອນ | 16-23 ເດືອນ |
| 5-6 ເດືອນ | 2 ປີ |
| 7-9 ເດືອນ | 3 ປີ |

## ເດັກນ້ອຍເຂົ້າໂຮງຮຽນ
***ຕັ້ງແຕ່ອາຍຸ 4 ປີຫາ 12 ປີ***

### ການກວດສຸຂະພາບທົ່ວໄປເມື່ອເຂົ້າໂຮງຮຽນ

ກົດໝາຍຣັຖກຳນົດໃຫ້ເດັກນ້ອຍທີ່ເຂົ້າອະນຸບານ ຫລື ຊັ້ນທີໜຶ່ງຕ້ອງຮັບການກວດສຸຂະພາບທົ່ວໄປແລະສັກຢາປ້ອງກັນພະຍາດຕາມກຳນົດເປັນປະຈຳ.

ການກວດສຸຂະພາບທົ່ວໄປອາດຊ່ວຍໃຫ້ຮູ້ບັນຫາດ້ານສຸຂະພາບທີ່ເປັນອຸປະສັກຕໍ່ການຮຽນຂອງເດັກນ້ອຍ.



### ກວດຈັກເທື່ອ?

ຮັບການກວດໜຶ່ງຄັ້ງໃນລະຫວ່າງອາຍຸເຫລົ່ານີ້:

ລະຫວ່າງອາຍຸ 4-5 ປີ
ລະຫວ່າງອາຍຸ 6-8 ປີ
ລະຫວ່າງອາຍຸ 9-12 ປີ

## ໄວໜຸ່ມແລະເຍົາວະຊົນ
***ຕັ້ງແຕ່ອາຍຸ 13 ປີຫາ 20 ປີ***

### ການກວດສຸຂະພາບທົ່ວໄປ

ບັນດາຊາວໜຸ່ມກໍ່ຈຳເປັນຕ້ອງໄດ້ກວດສຸຂະພາບເໝືອນກັນ! ເຂົາເຈົ້າອາດມີຂໍ້ສົງໄສຕ່າງໆ ກ່ຽວກັບສຸຂະພາບຂອງເຂົາເຈົ້າ. ເຂົາເຈົ້າສາມາດຖາມທ່ານໝໍໄດ້.



### ກວດຈັກເທື່ອ?

ຮັບການກວດໜຶ່ງຄັ້ງໃນລະຫວ່າງອາຍຸເຫລົ່ານີ້:

ລະຫວ່າງອາຍຸ 13-16 ປີ
ລະຫວ່າງອາຍຸ 17-20 ປີ

ຈົ່ງຖາມທ່ານໝໍຂອງທ່ານຫລືພະແນກສຸຂະພາບໃນທ້ອງຖິ່ນ ເພື່ອຮູ້ກ່ຽວກັບການບໍລິການອື່ນໆ ສຳລັບຊາວໜຸ່ມ.